ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
===== 000 =====

LALCO
LAO ASEAN LEASING PUBLIC COMPANY

ເລກທີ. 00007829
ນະຄອນຫຼວງວຽງຈັນ, ວັນທີ: 31 ມີນາ 2022

ຮຽນ: - ທ່ານ ຫົວໜ້າ ສານັກງານຄະນະກາມະການຄຸ້ມຄອງຫຼັກຊັບ
- ທ່ານ ຜູ້ອຳນວຍການໃຫຍ່ ຕະລາດຫຼັກຊັບລາວ
- ບັນດາຜູ້ຖືຮຸ້ນ ຂອງ ບໍລິສັດ ລາວອາຊຽນ ເຊົ່າສິນເຊື່ອ ມະຫາຊົນ ທີ່ນັບຖື.

ເລື່ອງ: ແຈ້ງມະຕິສຳຄັນຂອງກອງປະຊຸມສະພາບໍລິຫານ ຄັ້ງວັນທີ 31 ມີນາ 2022.

- ອີງຕາມລະບຽບວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ສະບັບເລກທີ 04/ຄຄຊ ລົງວັນທີ 14 ມີນາ 2019;
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ສະບັບເລກທີ 330/ຕລຊລ ລົງວັນທີ 27 ກັນຍາ 2018;

ບໍລິສັດ ລາວອາຊຽນ ເຊົ່າສິນເຊື່ອ ມະຫາຊົນ ຂໍຖືເປັນກຽດຂໍແຈ້ງມະຕິສຳຄັນ ຂອງກອງປະຊຸມສະພາບໍລິຫານຄັ້ງວັນທີ 31 ມີນາ 2022 ດັ່ງມີລາຍລະອຽດລຸ່ມນີ້:

- ຮັບຮອງບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດ ລວມທັງບົດລາຍງານການເງິນປີ 2021 ເຊິ່ງໄດ້ຜ່ານການກວດສອບ ເພື່ອສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນໃຫ້ ພິຈາລະນາ ແລະ ຮັບຮອງ.
- ຮັບຮອງບໍ່ຈ່າຍເງິນປັນຜົນ ຈາກຜົນການດຳເນີນທຸລະກິດ ປະຈຳປີ 2021 ເພື່ອນຳໃຊ້ເປັນກອງທຶນໃນທຸລະກິດ ແລະ ສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນເພື່ອ ພິຈາລະນາ ແລະ ຮັບຮອງ.
- ອະນຸມັດແຜນທຸລະກິດຂອງ ລອຊ ສຳລັບປີ 2022 ສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນເພື່ອ ພິຈາລະນາ ແລະ ຮັບຮອງ.
- ອະນຸມັດບໍລິສັດກວດສອບ EY ເປັນຜູ້ກວດສອບປະຈຳປີ 2022 ແລະ ສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນເພື່ອ ພິຈາລະນາ ແລະ ຮັບຮອງ.
- ອະນັດມັດໃຫ້ ທ່ານ ຮອງຜູ້ອຳນວຍການຝ່າຍການເງິນເປັນຜູ້ກະກຽມກອງປະຊຸມຜູ້ຖືຮຸ້ນປະຈຳປີ 2021.
- ຮັບຮອງ ການກະກຽມຈັດກອງປະຊຸມຜູ້ຖືຮຸ້ນປະຈຳປີ 2021 ດັ່ງນີ້:
  - ກຳນົດເອົາວັນທີ 12 ເມສາ 2022 ເປັນມື້ປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນທີ່ຈະ ເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນປະຈຳປີ 2021.
  - ກຳນົດໃນວັນທີ 28 ເມສາ ປີ 2022 ເຊິ່ງເປັນວັນທີ່ຈັດກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2021.
  - ສະຖານທີ່ຈັດກອງປະຊຸມຜູ້ຖືຮຸ້ນ: ຊັ້ນ 3, ຕຶກ ເອັນເອັນເອັນ, ບ້ານໂພນສີນວນ ເມືອງສີສັດຕະນາກ ນະຄອນຫຼວງ ວຽງຈັນ ເວລາ 13:30 ໂມງແລງ.
  - ກຳນົດວາລະກອງປະຊຸມ ຜູ້ຖືຮຸ້ນດັ່ງນີ້:

    ວາລະທີ 1: ລາຍງານບົດບັນທຶກກອງປະຊຸມຜູ້ຖືຮຸ້ນໃນປີຜ່ານມາ

    ວາລະທີ 2:ພິຈາລະນາ ແລະ ຮັບຮອງບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດ ລວມທັງບົດລາຍງານການເງິນປີ 2021 ເຊິ່ງໄດ້ຜ່ານການກວດສອບ ເພື່ອສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນໃຫ້ ພິຈາລະນາ ແລະ ຮັບຮອງ.

    ວາລະທີ 3: ພິຈາລະນາ ແລະ ຮັບຮອງບໍ່ຈ່າຍເງິນປັນຜົນ ຈາກຜົນການດຳເນີນທຸລະກິດ ປະຈຳປີ 2021 ເພື່ອນຳໃຊ້ເປັນກອງທຶນໃນທຸລະກິດ ແລະ ສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນເພື່ອ ພິຈາລະນາ ແລະ ຮັບຮອງ.

    ວາລະທີ 4: ພິຈາລະນາ ແລະ ຮັບຮອງແຜນທຸລະກິດຂອງ ລອຊ ສຳລັບປີ 2022 ສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນເພື່ອ ພິຈາລະນາ ແລະ ຮັບຮອງ.

    ວາລະທີ 5: ພິຈາລະນາ ແລະ ຮັບຮອງບໍລິສັດກວດສອບ EY ເປັນຜູ້ກວດສອບປະຈຳປີ 2022 ແລະ ສະເໜີຕໍ່

ກອງປະຊຸມຜູ້ຖືຮຸ້ນເພື່ອ ພິຈາລະນາ ແລະ ຮັບຮອງ.

ວາລະທີ່ 6: ບັນຫາອື່ນໆ (ຖ້າມີ)

ດັ່ງນັ້ນ ຈຶ່ງຮຽນມາຍັງທ່ານເພື່ອຊາບ ແລະ ໃຊ້ຕາງລາຍງານ.

ດ້ວຍຄວາມນັບຖືຢ່າງສູງ

ສະພາບໍລິຫານ



ທ່ານນາງ ຢຸກີ ສະກັອດ